ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

# ບົດຂ່າວ

## ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໃຫ້ບໍລິການທະນາຄານ ແກ່ໂຄງການທາງດ່ວນວຽງຈັນ-ວັງວຽງ ແລະ ໂຄງການເມືອງໃໝ່ທັນສະໄໝ ອຳມະຕະຊິຕີ້

ໃນວັນທີ 27 ພະຈິກ 2020, ຢູ່ທີ່ ໂຮງແຮມ ເມືອງແທ່ງ ໄດ້ມີພິທີເຊັນສັນຍາວ່າດ້ວຍ ການບໍລິການຮັບເງິນສົດຕາມຈຸດສະຖານີທາງດ່ວນວຽງຈັນ-ວັງວຽງ ລະຫວ່າງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ບໍລິສັດຮ່ວມທຶນ ພັດທະນາທາງດ່ວນ ລາວ-ຈີນ ຈຳກັດ;

ທາງດ່ວນວຽງຈັນ-ວັງວຽງ ເປັນໂຄງການກໍ່ສ້າງທາງດ່ວນໄລຍະທີ 1 ມີຄວາມຍາວ 109 ກິໂລແມັດ ນັບແຕ່ ເມືອງນາຊາຍທອງ ນະຄອນຫຼວງວຽງຈັນ ຫາ ເມືອງວັງວຽງ ຂອງແຂວງວຽງຈັນ, ກວ້າງ 23 ແມັດ, ມີ 4 ຊ່ອງທາງຈະລາຈອນ, ມີ 2 ແລວ ໄປ-ກັບ, ມີອຸໂມງ 1 ແຫ່ງ ຢູ່ເຂດພູພະ, ມີຂົວຂ້າມທັງໝົດ 34 ແຫ່ງ ເຊິ່ງປະກອບດ້ວຍຂົວຂ້າມທາງ ເລກທີ 13 ເໜືອ 3 ຈຸດ, ຂ້າມທາງລົດໄຟ 4 ຈຸດ ແລະ ຂ້າມທາງເຂົ້າບ້ານທົ່ວໄປ 23 ຈຸດ ແລະ ຈຸດເຊື່ອມຕໍ່ເຂົ້າ-ອອກມີ 7 ຈຸດ ຄື: ບ້ານສີເກີດ, ບ້ານນາຊອນ, ບ້ານບົວບ້ານສະກ້າ, ບ້ານໂພນໂຮງ, ບ້ານຫີນເຫີບ ແລະ ວັງວຽງ, ໃນເບື້ອງຕົ້ນແມ່ນ ທຄຕລ ຈະໃຫ້ບໍລິການໃນການເຄື່ອນຍ້າຍເງິນສົດຕາມຈຸດສະຖານີຕ່າງໆໃຫ້ແກ່ໂຄງການດັ່ງກ່າວ.




ຕາງໜ້າລົງນາມໃນຄັ້ງນີ້ໂດຍ ທ່ານ ທ່ານ ພູຂົງ ຈັນທະຈັກ ຜູ້ອຳນວຍການໃຫຍ່ ທຄຕລ ແລະ ທ່ານ ທ່າງຢິງຄົ້ວ, ປະທານບໍລິສັດຮ່ວມທຶນ ພັດທະນາທາງດ່ວນ ລາວ-ຈີນ ຈຳກັດ, ໃຫ້ກຽດເຂົ້າຮ່ວມເປັນສັກຂີພະຍານໂດຍ ທ່ານ ບຸນເຫຼືອ ສິນໄຊວໍຣະວົງ ຮອງລັດຖະມົນຕີກະຊວງການເງິນ- ປະທານສະພາບໍລິຫານ ທຄຕລ, ທ່ານ ນາງ ລຳມອນ ສິມມະໄລວົງ ຮອງຫົວໜ້າກົມຄຸ້ມຄອງລະບົບຊຳລະສະສາງ ທະນາຄານແຫ່ງ ສປປ ລາວ, ທ່ານ ນັນທະລາດ ແກ້ວປະເສີດ ຮອງຜູ້ອຳນວຍການໃຫຍ່ ທຄຕລ, ທ່ານ ຫຼວນຈິ້ງ ຮອງຜູ້ອຳນວຍການໃຫຍ່ ທະນາຄານ ICBC ພ້ອມດ້ວຍພະນັກງານຂອງທັງສອງຝ່າຍ ແລະ ສື່ມວນຊົນຈາກຫຼາຍພາກສ່ວນກໍ່ໄດ້ເຂົ້າຮ່ວມຢ່າງພ້ອມພຽງ.

ໃນວັນດຽວກັນ, ກໍ່ໄດ້ມີພິທີເຊັນ ບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການບໍລິການທະນາຄານໃຫ້ແກ່ໂຄງການເມືອງໃໝ່ທັນສະໄໝ ອໍາມະຕະຊິຕີ້ ລະຫວ່າງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ບໍລິສັດ ອໍາມະຕະຊິຕີ້ລາວ ຈໍາກັດຜູ້ດຽວ. ໂຄງການ ພັດທະນາເມືອງໃໝ່ທັນສະໄໝ ອໍາມະຕະຊິຕີ້ ເປັນໂຄງການລົງທຶນຂະໜາດໃຫຍ່ອີກໂຄງການໜຶ່ງຂອງກຸ່ມບໍລິສັດອໍາມະຕະ, ເປັນໂຄງການທີ່ມີຄວາມສໍາຄັນໃນການສ້າງແຜນຜັງເມືອງຕາມເຂດລ່ອງທາງລົດໄຟລາວ-ຈີນ ໂດຍສະເພາະທີ່ແຂວງ ອຸດົມໄຊ ແລະ ຫຼວງນໍ້າທາ ໃຫ້ກາຍເປັນເຂດເສດຖະກິດ, ສົ່ງເສີມການລົງທຶນ ທັງພາຍໃນ ແລະ ຈາກຕ່າງປະເທດ, ຈະຊ່ວຍໃນການພັດທະນາ ເສດຖະກິດ ແລະ ສັງຄົມ ໃຫ້ມີຄວາມຈະເລີນຮຸ່ງເຮືອງຂຶ້ນໃນຕໍ່ໜ້າ;




ຕາງໜ້າລົງນາມໃນຄັ້ງນີ້ໂດຍ ທ່ານ ພູຂົງ ຈັນທະຈັກ ຜູ້ອໍານວຍການໃຫຍ່ ທຄຕລ ແລະ ທ່ານ ວະຣົງ ຕັງປະພຶດກຸນ ຜູ້ອໍານວຍການໃຫຍ່ ບໍລິສັດອໍາມະຕະຊິຕີ້ ລາວ ໃຫ້ກຽດເຂົ້າຮ່ວມເປັນສັກຂີພະຍານໂດຍ ທ່ານ ບຸນເຫຼືອ ສິນໄຊວໍຣະວົງ, ຮອງລັດຖະມົນຕີກະຊວງການເງິນ- ປະທານສະພາບໍລິຫານ ທຄຕລ, ທ່ານ ວິກົມ ກົມມະດິດ ປະທ່ານກຸ່ມບໍລິສັດອໍາມະຕະ ປະເທດໄທ, ພ້ອມດ້ວຍຄະນະກົມທີ່ກ່ຽວຂ້ອງ, ພະນັກງານຂອງທັງສອງຝ່າຍ ແລະ ສື່ມວນຊົນຈາກຫຼາຍພາກສ່ວນກໍ່ໄດ້ເຂົ້າຮ່ວມຢ່າງພ້ອມພຽງ.